ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 237 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 24.12.2012

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍຊັບສິນຂອງລັດ ສະບັບປັບປຸງ

---

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 076/ສພຊ, ລົງວັນທີ 5 ກໍລະກົດ 2012;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 04/ຄປຈ, ລົງວັນທີ 23 ກໍລະກົດ 2012;

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1. ປະກາດໃຊ້ກົດໝາຍ ວ່າດ້ວຍຊັບສິນຂອງລັດ ສະບັບປັບປຸງ.

ມາດຕາ 2. ລັດຖະດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດແຫ່ງ ສປປ ລາວ.**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ ເລກທີ 076 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ຊັບສິນຂອງລັດ ສະບັບປັບປຸງ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນ ຂອງກົດໝາຍວ່າດ້ວຍ ຊັບສິນຂອງລັດ ສະບັບປັບປຸງ ໃນວາລະກອງປະຊຸມຕອນບ່າຍຂອງວັນທີ 5 ກໍລະກົດ 2012

**ກອງປະຊຸມໄດ້ຕົກລົງ:**

<u>ມາດຕາ 1.</u> ຮັບຮອງເອົາ ກົດໝາຍວ່າດ້ວຍ ຊັບສິນຂອງລັດ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2.</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 5 ກໍລະກົດ 2012

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------------

ສະພາແຫ່ງຊາດ ເລກທີ 14 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 5 ກໍລະກົດ 2012

# ກົດໝາຍ
# ວ່າດ້ວຍ ຊັບສິນຂອງລັດ (ສະບັບປັບປຸງ)
## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການນໍາໃຊ້, ການປົກປັກຮັກສາ, ການພັດທະນາ ແລະ ການຕິດຕາມ ກວດກາ ຊັບສິນຂອງລັດ ເພື່ອໃຫ້ມີປະສິດທິພາບ, ປະສິດທິຜົນ, ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍ ແລະ ລະບຽບກົດໝາຍ ແນໃສ່ປົກປັກຮັກສາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໃຫ້ມີຄວາມຍືນຍົງ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2 (ປັບປຸງ) ຊັບສິນຂອງລັດ**

ຊັບສິນຂອງລັດ ແມ່ນ ຊັບສົມບັດທີ່ເກີດຂຶ້ນຕາມທໍາມະຊາດ, ການສ້າງຂຶ້ນຂອງຄົນທີ່ເປັນກໍາມະສິດຂອງລັດ ແລະ ຂອງວິງຄະນະຍາດແຫ່ງຊາດ ຊຶ່ງປະກອບດ້ວຍ ສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ຢູ່ເທິງໜ້າດິນ,ໃຕ້ດິນ, ໜ້ານໍ້າ, ໃຕ້ນໍ້າ ແລະ ນ່ານຟ້າໃນຂອບເຂດພື້ນແຜ່ນດິນຂອງ ສປປ ລາວ ລວມທັງຊັບສິນຂອງລັດ ສປປ ລາວ ທີ່ມີຢູ່ຕ່າງປະເທດ.

**ມາດຕາ 3 (ໃໝ່) ການອະທິບາຍຄໍາສັບ**

**ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:**

1. **ສັງຫາລິມະຊັບ ໝາຍເຖິງ** ຊັບທີ່ສາມາດເຄື່ອນຍ້າຍໄດ້ ຊຶ່ງປະກອບດ້ວຍ ຊັບສິນທີ່ມີຕົວຕົນ ເປັນຕົ້ນ ພາຫະນະ, ເຄື່ອງກົນຈັກ, ວັດຖຸ ແລະ ຊັບສິນ ທີ່ບໍ່ມີຕົວຕົນ ເປັນຕົ້ນ ຊັບສິນທາງປັນຍາ;

2. **ອະສັງຫາລິມະຊັບ ໝາຍເຖິງ** ຊັບທີ່ບໍ່ສາມາດເຄື່ອນຍ້າຍໄດ້ ຄື: ທີ່ດິນ ແລະ ສິ່ງກໍ່ສ້າງ;

3. **ສິ່ງກໍ່ສ້າງ ໝາຍເຖິງ** ຕຶກ, ອາຄານ, ໂຮງຈັກ, ໂຮງງານ, ເຂື່ອນໄຟຟ້າ, ພື້ນຖານໂຄງລ່າງ ແລະ ບູຮານສະຖານ;

4. **ການຂຶ້ນບັນຊີຊັບສິນຂອງລັດ ໝາຍເຖິງ** ການຈົດກ່າຍຈຳນວນ, ເລກທະບຽນ, ເລກລະຫັດ, ມູນຄ່າ ແລະ ຕົ້ນກຳເນີດຂອງຊັບສິນຂອງລັດ;

5. **ການຂຶ້ນທະບຽນຊັບສິນຂອງລັດ ໝາຍເຖິງ** ການຕິດກາໝາຍ, ການໃສ່ເລກທະບຽນ, ລະຫັດຊັບສິນຂອງລັດ ຊຶ່ງເປັນການກຳນົດລັກສະນະສະເພາະ ແລະ ເປັນຂໍ້ມູນເບື້ອງຕົ້ນຂອງການລົງບັນຊີຕິດຕາມ;

6. **ພະນັກງານຄຸ້ມຄອງຊັບສິນຂອງລັດ ໝາຍເຖິງ** ພະນັກງານ-ລັດຖະກອນ ທີ່ສັງກັດຢູ່ຂະແໜງການຄຸ້ມຄອງຊັບສິນຂອງລັດ;

7. **ຂະແໜງການຄຸ້ມຄອງຊັບສິນຂອງລັດ ໝາຍເຖິງ** ການຈັດຕັ້ງ ທີ່ເຮັດວຽກງານຄຸ້ມຄອງຊັບສິນຂອງລັດ ຊຶ່ງປະກອບດ້ວຍ ກົມຄຸ້ມຄອງຊັບສິນຂອງລັດ, ຫ້ອງການຄຸ້ມຄອງຊັບສິນຂອງລັດ ປະຈຳແຂວງ, ນະຄອນ ແລະ ໜ່ວຍງານຄຸ້ມຄອງຊັບສິນຂອງລັດ ປະຈຳເມືອງ, ເທດສະບານ;

8. **ຄ່າພາກຫຼວງ ໝາຍເຖິງ** ຄ່າຊົມໃຊ້ຊັບພະຍາກອນທຳມະຊາດ ຊຶ່ງຜູ້ໄດ້ຮັບສິດນຳໃຊ້ຊັບພະຍາກອນດັ່ງກ່າວ ຕ້ອງຈ່າຍໃຫ້ລັດ ໂດຍການຄິດໄລ່ເປັນອັດຕາສ່ວນຮ້ອຍ ຂອງລາຍຮັບທັງໝົດ;

9. **ດິນ ໝາຍເຖິງ** ດິນທີ່ຍັງເປັນທຳມະຊາດຢູ່ ຊຶ່ງຕ້ອງໄດ້ຂຶ້ນບັນຊີຊັບສິນຂອງລັດ;

10. **ທີ່ດິນ ໝາຍເຖິງ** ດິນທີ່ມີການພັດທະນາແລ້ວ ຊຶ່ງຕ້ອງໄດ້ຂຶ້ນທະບຽນຊັບສິນຂອງລັດ.

**ມາດຕາ 4 (ປັບປຸງ) ການໄດ້ມາຊັບສິນຂອງລັດ**

ຊັບສິນຂອງລັດ ໄດ້ມາຈາກຊັບສົມບັດທີ່ເກີດຂຶ້ນຕາມທຳມະຊາດ ແລະ ຈາກການສ້າງຂຶ້ນຂອງຄົນ.

ຊັບສິນຂອງລັດ ທີ່ເກີດຂຶ້ນຕາມທຳມະຊາດ ປະກອບດ້ວຍ ດິນ, ດອນ, ພູ, ຜາ, ປ່າໄມ້, ບໍ່ແຮ່, ແຫຼ່ງນ້ຳ, ສັດນ້ຳ, ສັດປ່າ, ນ່ານຟ້າ, ອາກາດ ແລະ ຊັບພະຍາກອນທຳມະຊາດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ຊັບສິນຂອງລັດ ທີ່ໄດ້ມາຈາກການສ້າງຂຶ້ນຂອງຄົນ ປະກອບດ້ວຍ:**

1. ຊັບສິນ ທີ່ເປັນມໍຣະດົກຂອງຊາດ ຊຶ່ງມີມໍຣະດົກທາງດ້ານທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ;

2. ຊັບສິນ ທີ່ໄດ້ມາຈາກງົບປະມານຂອງລັດ ດ້ວຍ ການຊື້, ການແລກປ່ຽນ, ຊັບສິນທີ່ໄດ້ມາຈາກການຊ່ວຍເຫຼືອ, ການກູ້ຢືມ, ການມອບກຳມະສິດໃຫ້ລັດ, ການຮິບຊັບຕາມຄຳຕັດສິນຂອງສານ, ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ ແລະ ມູນມໍຣະດົກທີ່ບໍ່ມີສາຍຍາດສືບທອດ ລວມທັງຊັບສິນທີ່ຕົກເປັນກຳມະສິດຂອງລັດ ດ້ວຍຮູບການອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 5 (ປັບປຸງ) **ກຳມະສິດກ່ຽວກັບຊັບສິນຂອງລັດ**

ຊັບສິນຂອງລັດ ເປັນກຳມະສິດຂອງລັດ ແລະ ຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຜູ້ຄຸ້ມຄອງຢ່າງລວມສູນ ເປັນເອກະພາບ ໂດຍມອບໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ຄຸ້ມຄອງ, ນຳໃຊ້, ໃຫ້ເຊົ່າ, ໃຫ້ສຳປະທານ, ປົກປັກຮັກສາ ແລະ ພັດທະນາແບບຍືນຍົງ ຕາມລະບຽບກົດໝາຍ.

ມາດຕາ 6 (ໃໝ່) **ນະໂຍບາຍກ່ຽວກັບການຄຸ້ມຄອງຊັບສິນຂອງລັດ**

ລັດ ມີນະໂຍບາຍລົງທຶນໃສ່ການຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ ແລະ ພັດທະນາຊັບສິນຂອງລັດ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງດ້ວຍການນຳໃຊ້ລະບົບເຕັກນິກທີ່ທັນສະໄໝ.

ລັດ ຊຸກຍູ້ ແລະ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ປະກອບສ່ວນລົງທຶນເຂົ້າໃນການປົກປັກຮັກສາ ແລະ ພັດທະນາຊັບສິນຂອງລັດ ດ້ວຍການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ດ້ວຍຮູບການ ທັນຊັບສິນເປັນທຶນ, ມອບສິດຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ ແລະ ສິດໄດ້ຮັບຜົນປະໂຫຍດຈາກຊັບສິນດັ່ງກ່າວ.

ມາດຕາ 7 (ໃໝ່) **ຫຼັກການກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ ຊັບສິນຂອງລັດ**

**ການຄຸ້ມຄອງ ແລະ ນຳໃຊ້ ຊັບສິນຂອງລັດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:**

1. ຕ້ອງໃຫ້ເປັນເອກະພາບ ແລະ ລວມສູນໃນຂອບເຂດທົ່ວປະເທດ, ມີການຈັດແບ່ງຂັ້ນ ແລະ ຄວາມຮັບຜິດຊອບຂອງແຕ່ລະອົງການຈັດຕັ້ງຂອງລັດ ທີ່ກ່ຽວຂ້ອງ;
2. ຕ້ອງໄດ້ຮັບສິດຈາກລັດ;
3. ຕ້ອງໃຫ້ຖືກຕາມເປົ້າໝາຍ, ມາດຕະຖານ, ລະດັບຂັ້ນ, ມີປະສິດທິພາບ, ປະສິດທິຜົນ, ເປີດເຜີຍ, ໂປ່ງໃສ, ສະເໝີພາບ, ປະຢັດ, ຍາວນານ ຫຼື ຍືນຍົງ;
4. ຕ້ອງໄດ້ບຳລຸງຮັກສາ, ສ້ອມແປງ ໃຫ້ຢູ່ໃນສະພາບດີ ແລະ ໃຊ້ແທນຊັບສິນທີ່ຕົກເຮັ່ຍເສັຍຫາຍ ຕາມລະບຽບກົດໝາຍ;
5. ຕ້ອງຕີລາຄາມູນຄ່າຊັບສິນຂອງລັດ ຕາມກົນໄກຕະຫຼາດ ໃນການຊື້, ຂາຍ, ໃຫ້ເຊົ່າ, ໃຫ້ສຳປະທານ, ເຂົ້າຮ່ວມທຶນ, ແລກປ່ຽນ ແລະ ອື່ນໆ ເວັ້ນເສັຍແຕ່ກົດໝາຍຫາກໄດ້ກຳນົດໄວ້ຢ່າງອື່ນ;
6. ຕ້ອງມອບລາຍຮັບທີ່ໄດ້ຈາກຊັບສິນຂອງລັດ ເຂົ້າເປັນລາຍຮັບງົບປະມານແຫ່ງລັດ.

ມາດຕາ 8 **ການປົກປ້ອງສິດໃນການຄຸ້ມຄອງ ແລະ ນຳໃຊ້ ຊັບສິນຂອງລັດ**

ລັດ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ທີ່ໄດ້ຮັບສິດຄຸ້ມຄອງ ແລະ ນຳໃຊ້ ຊັບສິນຂອງລັດ ທີ່ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 9 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ທັງພາກລັດ ແລະ ເອກະຊົນ ທີ່ໄດ້ຮັບສິດຄຸ້ມຄອງ ແລະ ນຳໃຊ້ ຊັບສິນຂອງລັດ ທີ່ມີຢູ່ໃນ ສປປ ລາວ ແລະ ຊັບສິນຂອງ ສປປ ລາວ ທີ່ມີຢູ່ໃນຕ່າງປະເທດ.

**ມາດຕາ 10 (ໃໝ່) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ແລະຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງ ແລະ ນຳໃຊ້ ຊັບສິນຂອງລັດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ການພັດທະນາຊັບພະຍາກອນມະນຸດ, ການຊ່ວຍເຫຼືອ ແລະ ອື່ນໆ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິຜົນ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ປະເພດຊັບສິນຂອງລັດ

**ມາດຕາ 11 (ປັບປຸງ) ປະເພດຊັບສິນຂອງລັດ**

ຊັບສິນຂອງລັດ ແບ່ງອອກເປັນສອງປະເພດ ຄື: ສາທາລະນະສົມບັດ ແລະ ລັດຖະສົມບັດ.

**ມາດຕາ 12 (ປັບປຸງ) ສາທາລະນະສົມບັດ**

ສາທາລະນະສົມບັດ ແມ່ນ ຊັບສິນຕ່າງໆຂອງວິງຄະນະຍາດແຫ່ງຊາດ ທີ່ເກີດຂຶ້ນຕາມທຳມະຊາດ ແລະ ຊັບສິນ ທີ່ອົງການຈັດຕັ້ງສັງຄົມ ຫຼື ບຸກຄົນ ສ້າງຂຶ້ນ ເພື່ອສາທາລະນະປະໂຫຍດ.

**ສາທາລະນະສົມບັດ ປະກອບດ້ວຍ:**

1. ຊັບພະຍາກອນທຳມະຊາດ: ດິນ, ນ່ານຟ້າ, ອາກາດ, ແມ່ນ້ຳ, ຫ້ວຍ, ບຶງ, ພູ, ຜາ, ຖ້ຳ, ປ່າໄມ້, ແຮ່ທາດ, ສັດນ້ຳ, ສັດປ່າ, ພືດທີ່ເກີດຂຶ້ນຕາມທຳມະຊາດ ແລະ ອື່ນໆ;
2. ມໍຣະດົກຂອງຊາດ: ສະຖານທີ່ທ່ອງທ່ຽວທຳມະຊາດ, ບູຮານສະຖານ, ວັດຖຸບູຮານ, ວັດວາອາຮາມ ແລະ ອື່ນໆ.

**ມາດຕາ 13 (ປັບປຸງ) ລັດຖະສົມບັດ**

ລັດຖະສົມບັດ ແມ່ນ ຊັບສິນທີ່ລັດ ລົງທຶນສ້າງຂຶ້ນ ຫຼື ໄດ້ມາດ້ວຍຄວາມຊອບທຳ, ຕາມລະບຽບກົດໝາຍ ຊຶ່ງປະກອບດ້ວຍສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ທີ່ມອບໃຫ້ການຈັດຕັ້ງ, ນິຕິບຸກຄົນ ແລະ ບຸກຄົນ ເປັນຜູ້ຄຸ້ມຄອງ ນຳໃຊ້.

ລັດຖະສົມບັດ ປະກອບດ້ວຍ:

1. ພື້ນຖານໂຄງລ່າງ: ລະບົບຊົນລະປະທານ, ລະບົບການຈະລາຈອນ, ຂົວ, ທາງ, ລະບົບນ້ຳປະປາ, ລະບົບລະບາຍນ້ຳ, ລະບົບໄຟຟ້າ, ລະບົບສະໜອງພະລັງງານ, ລະບົບເຄືອຂ່າຍສື່ສານ, ສະໜາມບິນ, ທ່າເຮືອ, ສຳນັກງານ, ອາຄານ, ໂຮງໝໍ, ສຸກສາລາ, ໂຮງຮຽນ, ສະຖານີ, ສວນສາທາລະນະ, ຕະຫຼາດຂອງລັດ ແລະ ກິດຈະການກໍ່ສ້າງພື້ນຖານໂຄງລ່າງອື່ນຂອງລັດ;

2. ທຶນທີ່ລັດປະກອບເຂົ້າໃນການດຳເນີນທຸລະກິດ, ພັນທະບັດ, ວັດຖຸມີຄ່າຂອງລັດ;

3. ພາຫະນະ, ວັດຖູປະກອນຂອງລັດ ແລະ ທີ່ດິນຂອງລັດ;

4. ຊັບສິນທາງປັນຍາຂອງລັດ ແລະ ສິດທິພິເສດຂອງລັດ;

5. ຊັບສິນອື່ນຂອງລັດ.

## ພາກທີ III
## ການຄຸ້ມຄອງ, ການນຳໃຊ້, ການປົກປັກຮັກສາ, ການພັດທະນາ ແລະ ການສະສາງ ຊັບສິນຂອງລັດ

### ໝວດທີ 1
### ການຄຸ້ມຄອງ ຊັບສິນຂອງລັດ

**ມາດຕາ 14 (ປັບປຸງ) ການຄຸ້ມຄອງຊັບສິນຂອງລັດ**

ລັດຖະບານແຫ່ງ ສປປ ລາວ ຄຸ້ມຄອງຊັບສິນຂອງລັດ ຢູ່ພາຍໃນ ແລະ ຕ່າງປະເທດ ຢ່າງລວມສູນ ແລະ ເປັນເອກະພາບ ໂດຍມອບໃຫ້ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງອື່ນ ເປັນຜູ້ຄຸ້ມຄອງ, ສ່ວນສາທາລະນະສົມບັດ ແມ່ນມອບໃຫ້ຂະແໜງການທີ່ກ່ຽວຂ້ອງ ເປັນຜູ້ຄຸ້ມຄອງ ຕາມກົດໝາຍທີ່ກ່ຽວຂ້ອງ.

ລັດຖະບານ ມອບສິດໃຫ້ກະຊວງການເງິນ ໃນການຄຸ້ມຄອງລັດຖະສົມບັດ ແບບລວມສູນ ດ້ວຍການຂຶ້ນບັນຊີ, ການຂຶ້ນທະບຽນ, ການເກັບລາຍຮັບ, ການຕີມູນຄ່າຊັບສິນ, ການຊື້ ແລະ ການສ້າງໃໝ່, ການມອບ-ໂອນ, ການທັນຊັບສິນເປັນທຶນ, ການແລກປ່ຽນ, ການໃຫ້ເຊົ່າ ຫຼື ສຳປະທານ, ການເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ ແລະ ການປ່ຽນສິດຄຸ້ມຄອງຊັບສິນຂອງລັດ.

ສິດຕົກລົງກ່ຽວກັບຊັບສິນຂອງລັດ ທີ່ຈະນຳໃຊ້, ມອບ-ໂອນ, ແລກປ່ຽນ, ທັນປ່ຽນກຳມະສິດ, ໃຫ້ເຊົ່າ ຫຼື ສຳປະທານ, ເອົາເຂົ້າຮຸ້ນ ຫຼື ຮ່ວມທຶນນັ້ນ ແມ່ນ ລັດຖະບານ ເປັນຜູ້ຕົກລົງບົນພື້ນຖານການສະເໜີຂອງກະຊວງການເງິນ ໂດຍປະສານສົມທົບກັບກະຊວງອື່ນ ຫຼື ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ. ຖ້າຊັບສິນ ມີລັກສະນະຍຸດທະສາດ ຫຼື ມີ ຄວາມສຳຄັນລະດັບຊາດ ແມ່ນ ສະພາແຫ່ງຊາດ ເປັນຜູ້ຕົກລົງ.

ສ່ວນລະບຽບການລະອຽດ ໄດ້ກຳນົດໄວ້ສະເພາະ.

### ມາດຕາ 15 (ປັບປຸງ) ການຂຶ້ນບັນຊີຊັບສິນຂອງລັດ

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງອື່ນ ທີ່ນຳໃຊ້ງົບປະມານຂອງລັດ ແຕ່ສູນກາງລົງຮອດທ້ອງຖິ່ນ ຕ້ອງໄດ້ຂຶ້ນບັນຊີຊັບສິນ ແລະ ເກັບມ້ຽນເອກະສານປະຫວັດຊັບສິນຂອງລັດ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ແລ້ວນຳໄປຂຶ້ນບັນຊີລວມສູນຢູ່ຂະແໜງການຄຸ້ມຄອງຊັບສິນຂອງລັດ ຂັ້ນຂອງຕົນ.

ສຳລັບຊັບສິນທີ່ລັດໄດ້ມາຈາກການຮິບຕາມຄຳຕັດສິນຂອງສານ, ຊັບສິນທີ່ບໍ່ມີເຈົ້າຂອງ, ຊັບສິນທີ່ຄົ້ນພົບ ພາຍຫຼັງການກວດກາຈາກພາກສ່ວນທີ່ກ່ຽວຂ້ອງນັ້ນແລ້ວ ໃຫ້ແຈ້ງ ແລະ ຂຶ້ນບັນຊີຢູ່ຂະແໜງການຄຸ້ມຄອງຊັບສິນຂອງລັດ.

ຂັ້ນຕອນຂອງການຂຶ້ນບັນຊີຊັບສິນຂອງລັດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 16 (ປັບປຸງ) ການຂຶ້ນທະບຽນຊັບສິນຂອງລັດ

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງອື່ນ ທີ່ນຳໃຊ້ງົບປະມານຂອງລັດ ແຕ່ສູນກາງລົງຮອດທ້ອງຖິ່ນ ຕ້ອງໄດ້ນຳບັນຊີຊັບສິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນໄປຂຶ້ນທະບຽນລວມສູນຢູ່ຂະແໜງການຄຸ້ມຄອງຊັບສິນຂອງລັດ ຂັ້ນຂອງຕົນ.

ຊັບສິນຂອງລັດທີ່ມີມູນຄ່າສູງ ຕ້ອງໄດ້ຂຶ້ນທະບຽນ ເຊັ່ນ ທີ່ດິນ, ເຄຫະສະຖານ, ມໍຣະດົກຂອງຊາດ, ພາຫະນະກົນຈັກ, ພາຫະນະຂົນສົ່ງ, ພາຫະນະຮັບໃຊ້, ວັດຖຸປະກອນ.

ກະຊວງການເງິນ ເປັນຜູ້ກຳນົດ ເລກລະຫັດ, ເລກທະບຽນ ແລະ ເຄື່ອງໝາຍຊັບສິນຂອງລັດແຕ່ລະປະເພດ ເພື່ອຄວາມເປັນເອກະພາບໃນການຂຶ້ນທະບຽນ.

ໃນກໍລະນີທີ່ມີການ ມອບ-ໂອນ ຊັບສິນຂອງເອກະຊົນມາເປັນຂອງລັດ ຫຼື ຂອງລັດໄປເປັນຂອງເອກະຊົນ ຫຼື ລະຫວ່າງອົງການຈັດຕັ້ງຂອງລັດດ້ວຍກັນນັ້ນ ພາກສ່ວນທີ່ກ່ຽວຂ້ອງຕ້ອງນຳເອົາສັນຍາມອບ-ໂອນ ດັ່ງກ່າວ ພ້ອມດ້ວຍເອກະສານຕ່າງໆ ທີ່ກ່ຽວຂ້ອງກັບຊັບສິນນັ້ນໄປຂຶ້ນທະບຽນ ຫຼື ຈົດທະບຽນການມອບ-ໂອນກຳມະສິດ ຕາມແຕ່ລະກໍລະນີໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

### ມາດຕາ 17 (ປັບປຸງ) ເນື້ອໃນການຂຶ້ນທະບຽນ

ການຂຶ້ນທະບຽນຊັບສິນຂອງລັດ ຕ້ອງໄດ້ບັນທຶກ ຊື່, ເລກທະບຽນ, ເລກລະຫັດ, ປະເພດ, ເຄື່ອງໝາຍຊັບສິນ, ຈຸດພິເສດທາງດ້ານເຕັກນິກ, ມູນຄ່າ, ການໄດ້ມາ, ຈຸດປະສົງຂອງການນຳໃຊ້, ເວລາເລີ່ມນຳໃຊ້ ແລະ ຜູ້ນຳໃຊ້; ຖ້າຫາກແມ່ນທີ່ດິນ ຫຼື ເຮືອນ ຍັງຕ້ອງໄດ້ບັນທຶກ ທີ່ຕັ້ງ, ລັກສະນະ ແລະ ເນື້ອທີ່.

### ມາດຕາ 18 (ໃໝ່) ການເກັບລາຍຮັບ

ຂະແໜງການການເງິນ ເປັນຜູ້ເກັບລາຍຮັບຈາກຊັບສິນຂອງລັດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

ຂະແໜງການ ແລະ ອົງການຈັດຕັ້ງອື່ນ ທີ່ນຳໃຊ້ງົບປະມານຂອງລັດ ສາມາດເກັບລາຍຮັບຈາກຊັບສິນຂອງລັດ ແຕ່ຕ້ອງໄດ້ຮັບການມອບສິດຈາກລັດຖະບານ ຊຶ່ງລາຍຮັບດັ່ງກ່າວ ຕ້ອງມອບເປັນລາຍຮັບງົບປະມານຢ່າງລວມສູນ.

## ມາດຕາ 19 (ໃໝ່) ການຕີມູນຄ່າຊັບສິນຂອງລັດ

ຊັບສິນຂອງລັດ ຕ້ອງມີການຕີມູນຄ່າ ຕາມອາຍຸການນຳໃຊ້, ຕາມມາດຕະຖານເຕັກນິກຂອງຊັບສິນ ແລະ ຕາມກົນໄກຕະຫຼາດໂດຍຄະນະກຳມະການ ຊຶ່ງປະກອບດ້ວຍເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ, ຜູ້ຕາງໜ້າຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ການຕີມູນຄ່າຊັບສິນຂອງລັດ ມີຈຸດປະສົງເພື່ອກຳນົດລາຄາຊື້-ຂາຍ, ເປັນຂໍ້ມູນໃນເວລາມອບ-ໂອນ, ຕິດຕາມການເພີ່ມຂຶ້ນ ຫຼື ຫລຸດລົງຂອງຊັບສິນຂອງລັດ, ເພື່ອເອົາເຂົ້າຮຸ້ນ, ຫັນເປັນທຶນ, ຊຳລະສະສາງ ແລະ ອື່ນໆ.

ການດຳເນີນການຕີມູນຄ່າຊັບສິນຂອງລັດ ແຕ່ລະປະເພດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ມາດຕາ 20 (ໃໝ່) ການຊື້ ແລະ ການສ້າງໃໝ່ ລັດຖະສົມບັດ

ການຊື້ ແລະ ການສ້າງໃໝ່ ລັດຖະສົມບັດ ຕ້ອງໄດ້ປະຕິບັດຕາມກຳນົດໝາຍ, ມາດຕະຖານ, ລະດັບຂັ້ນ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ຊັບສິນ ດ້ວຍການເຂົ້າຮ່ວມກວດກາ ຂອງຂະແໜງການການເງິນ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ແຜນການຊື້ ແລະ ການສ້າງໃໝ່ ລັດຖະສົມບັດ ໃຫ້ນຳສະເໜີແຜນກ່ຽວກັບຄວາມຈຳເປັນ, ເປົ້າໝາຍການນຳໃຊ້, ພາກສ່ວນທີ່ຄຸ້ມຄອງ ແລະ ນຳໃຊ້, ຄາດຄະເນຜົນໄດ້ຮັບຈາກການຄຸ້ມຄອງ ແລະ ນຳໃຊ້ນັ້ນ.

ແຜນການຊື້ ແລະ ການສ້າງໃໝ່ ລັດຖະສົມບັດ ຕ້ອງໄດ້ຈັດເຂົ້າແຜນງົບປະມານແຫ່ງລັດປະຈຳປີ ໂດຍຜ່ານການຮັບຮອງຈາກ ສະພາແຫ່ງຊາດ.

ການຊື້ ແລະ ການສ້າງໃໝ່ ລັດຖະສົມບັດ ຕ້ອງປະຕິບັດຢ່າງເປີດເຜີຍ, ໂປ່ງໃສ ແລະ ຖືກຕ້ອງຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນນິຕິກຳກ່ຽວກັບການປະມູນ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ. ຂະແໜງການການເງິນ ເປັນຜູ້ຄຸ້ມຄອງການຈັດຕັ້ງປະຕິບັດ ການປະມູນໃນການຊື້ ແລະ ການສ້າງໃໝ່ ລັດຖະສົມບັດ ຕາມຄວາມຮັບຜິດຊອບຂອງຕົນ.

## ມາດຕາ 21 (ໃໝ່) ການມອບ-ໂອນ ລັດຖະສົມບັດ

ການມອບ-ໂອນ ລັດຖະສົມບັດ ແມ່ນ ການເອົາລັດຖະສົມບັດ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີກຳມະສິດ ໂດຍມີການຄົ້ນຄວ້າ, ປະເມີນຜົນ ເພື່ອຮັບປະກັນຄວາມໂປ່ງໃສ, ຜົນປະໂຫຍດສູງສຸດຂອງລັດ ແລະ ໃຫ້ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

ມາດຕາ 22 (ໃໝ່) **ການທັນຊັບສິນເປັນທຶນ**

ການທັນຊັບສິນເປັນທຶນ ແມ່ນ ການເອົາຊັບສິນໄປລົງທຶນ ດ້ວຍຮູບການໃຫ້ເຊົ່າ ຫຼື ສຳປະທານ, ການຄ້ຳປະກັນ, ການເອົາເຂົ້າຮຸ້ນ, ການຮ່ວມທຶນ, ການມອບ-ໂອນສິດນຳໃຊ້, ການຂາຍໂດຍມີກຳນົດ ຫຼື ບໍ່ມີກຳນົດຕາມແຕ່ລະກໍລະນີ, ເຮັດໃຫ້ຊັບສິນດັ່ງກ່າວມີການພັດທະນາ, ມີມູນຄ່າເພີ່ມຂຶ້ນ ເພື່ອເປັນແຫຼ່ງທຶນ ສຳລັບການພັດທະນາເສດຖະກິດ-ສັງຄົມຢ່າງໝັ້ນຄົງ.

ການທັນຊັບສິນເປັນທຶນ ຕ້ອງສ້າງເປັນແຜນການ, ໂຄງການ ໂດຍໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ, ມີນິຕິກຳຄຸ້ມຄອງລວມສູນ ເພື່ອຮັບປະກັນ ການຄົ້ນຄວ້າ, ປະເມີນຜົນ, ການປະມູນເປີດກວ້າງ ຕາມແຕ່ລະກໍລະນີ ແນໃສ່ຮັບປະກັນຄວາມໂປ່ງໃສ, ຄວາມໝັ້ນຄົງ ແລະ ຜົນປະໂຫຍດສູງສຸດຂອງຊາດ.

ມາດຕາ 23 (ໃໝ່) **ການແລກປ່ຽນ**

ການແລກປ່ຽນລັດຖະສິນບັດ ແມ່ນ ການເອົາຊັບສິນປະເພດໜຶ່ງ ປ່ຽນກັບຊັບສິນປະເພດ ດຽວກັນ ຫຼື ຊັບສິນປະເພດອື່ນ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ.

ໃນກໍລະນີຈຳເປັນ ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຕ້ອງສ້າງແຜນການແລກປ່ຽນຂອງຕົນ ໃຫ້ກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນເພື່ອຄົ້ນຄວ້າ, ສັງລວມ ແລະ ສະເໜີຂໍອະນຸມັດຈາກລັດຖະບານ.

ໃນການແລກປ່ຽນນັ້ນ ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໃຫ້ປະຕິບັດ ດັ່ງນີ້:

- ເກັບກຳຂໍ້ມູນຂ່າວສານ ເພື່ອນຳມາປະເມີນຊັບສິນທີ່ຕ້ອງການແລກປ່ຽນ;
- ຄົ້ນຄວ້າວິໄຈຜົນກະທົບຕ່າງໆ, ດ້ານດີ ແລະ ດ້ານອ່ອນ ຂອງການແລກປ່ຽນ;
- ປະເມີນມູນຄ່າລັດຖະສິນບັດ ແລະ ຊັບສິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຈະແລກປ່ຽນ.

ຖ້າຊັບສິນນຳມາແລກປ່ຽນ ຫາກເປັນໂຄງການກໍ່ສ້າງພື້ນຖານໂຄງລ່າງນັ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ການລົງທຶນຂອງລັດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ມາດຕາ 24 (ໃໝ່) **ການໃຫ້ເຊົ່າ ຫຼື ສຳປະທານ**

ການໃຫ້ເຊົ່າ ຫຼື ສຳປະທານຊັບສິນຂອງລັດ ແມ່ນ ການມອບສິດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້ຊັບສິນຂອງລັດ ໂດຍມີກຳນົດ ຊຶ່ງຜູ້ເຊົ່າ ຫຼື ຜູ້ສຳປະທານ ມີພັນທະຈ່າຍຄ່າເຊົ່າ ຫຼື ຄ່າສຳປະທານ ຕາມທີ່ໄດ້ຕົກລົງກັນ ໂດຍສອດຄ່ອງກັບລະບຽບກົດໝາຍ.

ໄລຍະເວລາການໃຫ້ເຊົ່າ ຫຼື ສຳປະທານ ສາມາດຕໍ່ໄດ້ ແຕ່ສູງສຸດບໍ່ໃຫ້ເກີນກຳນົດເວລາທີ່ໄດ້ບົ່ງໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

ການໃຫ້ເຊົ່າ ຫຼື ສຳປະທານ ສາມາດປະຕິບັດໄດ້ ດ້ວຍການປະມູນ ຫຼື ດ້ວຍການເຈລະຈາ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 25 (ໃໝ່) ການເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ**

ການເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ ແມ່ນ ການເອົາຊັບສິນໃດໜຶ່ງເຂົ້າເປັນຮຸ້ນ ຫຼື ຮ່ວມທຶນກັບວິສາຫະກິດໃດໜຶ່ງ ໃນການດຳເນີນທຸລະກິດ ເພື່ອແບ່ງປັນຜົນປະໂຫຍດ ແລະ ພັດທະນາເສດຖະກິດ-ສັງຄົມ.

ຖ້າຊັບສິນທີ່ຈະເອົາເຂົ້າຮຸ້ນ ຫຼື ຮ່ວມທຶນນັ້ນ ຫາກບໍ່ແມ່ນເງິນ ຕ້ອງຕີມູນຄ່າ ໂດຍຄະນະກຳມະການ ທີ່ໄດ້ຮັບການແຕ່ງຕັ້ງ ຈາກລັດຖະບານ.

ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ຄົ້ນຄວ້າ ແລະ ນຳສະເໜີການເອົາຊັບສິນເຂົ້າຮຸ້ນ ຫຼື ຮ່ວມທຶນ ຂອງຂະແໜງການຕົນ ໃຫ້ກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນ ເພື່ອສັງລວມ, ພິຈາລະນາ ແລະ ນຳສະເໜີຂໍອະນຸມັດຈາກລັດຖະບານ.

ໃນການເອົາເຂົ້າຮຸ້ນ ຫຼື ຮ່ວມທຶນນັ້ນ ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໃຫ້ປະຕິບັດ ດັ່ງນີ້:

- ເກັບກຳຂໍ້ມູນຂ່າວສານ ກ່ຽວກັບວັດຖຸທີ່ຈະເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ ເພື່ອນຳມາຕີມູນຄ່າ;
- ຄົ້ນຄວ້າວິໄຈຜົນກະທົບຕ່າງໆ, ດ້ານດີ ແລະ ດ້ານອ່ອນ ຂອງການເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ;
- ຕີລາຄາມູນຄ່າຊັບສິນ ແລະ ສະພາບການດຳເນີນທຸລະກິດ ຂອງບັນດາວິສາຫະກິດ ທີ່ຈະນຳເອົາຊັບສິນເຂົ້າຮຸ້ນ ຫຼື ຮ່ວມທຶນ.

**ມາດຕາ 26 (ໃໝ່) ການປ່ຽນສິດຄຸ້ມຄອງລັດຖະສິນບັດ**

ການປ່ຽນສິດຄຸ້ມຄອງ ລັດຖະສິນບັດ ແມ່ນ ການນຳເອົາສິດຄຸ້ມຄອງ ລັດຖະສິນບັດຂອງອົງການຈັດຕັ້ງໜຶ່ງຂອງລັດ ໄປໃຫ້ອົງການຈັດຕັ້ງອື່ນຂອງລັດ ຄຸ້ມຄອງ.

ການປ່ຽນສິດຄຸ້ມຄອງລັດຖະສິນບັດ ຕ້ອງໄດ້ຮັບການເຫັນດີ ຈາກຂະແໜງການການເງິນ ບົນພື້ນຖານການສະເໜີ ທີ່ເປັນເອກະພາບກ່ຽວກັບການປ່ຽນສິດຄຸ້ມຄອງລັດຖະສິນບັດ ລະຫວ່າງຂະແໜງການອື່ນດ້ວຍກັນ.

ຂະແໜງການການເງິນ ເປັນຜູ້ຄົ້ນຄວ້າກ່ຽວກັບການປ່ຽນສິດຄຸ້ມຄອງ ລັດຖະສິນບັດ ໃນກໍລະນີ ດັ່ງນີ້:

1. ຊັບສິນຂອງລັດທີ່ນຳໃຊ້ບໍ່ຖືກຕ້ອງຕາມເປົ້າໝາຍ;
2. ການປ່ຽນສິດຄຸ້ມຄອງ ຈາກບ່ອນເຫຼືອໄປຫາບ່ອນຂາດເຂີນ;
3. ການປ່ຽນສິດຄຸ້ມຄອງຈາກບ່ອນນຳໃຊ້ທີ່ບໍ່ມີປະສິດທິຜົນໄປຫາບ່ອນທີ່ມີປະສິດທິຜົນ;
4. ກໍລະນີອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ການພິຈາລະນາຕົກລົງກ່ຽວກັບການປ່ຽນສິດຄຸ້ມຄອງລັດຖະສິນບັດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ໝວດທີ 2
## ການນຳໃຊ້ຊັບສິນຂອງລັດ

**ມາດຕາ 27 (ປັບປຸງ) ການນຳໃຊ້ຊັບສິນຂອງລັດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດໄດ້ຮັບສິດນຳໃຊ້ຊັບສິນຂອງລັດ ຕາມລະບຽບກົດໝາຍ.

ການນຳໃຊ້ຊັບສິນຂອງລັດ ຕ້ອງຮັບປະກັນໃຫ້ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍຂອງແຕ່ລະປະເພດຊັບສິນຂອງລັດ.

ການນຳໃຊ້ສາທາລະນະສົມບັດ ແມ່ນ ເພື່ອຈຸດປະສົງຮັບໃຊ້ສາທາລະນະຊົນ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດໄດ້ຮັບສິດນຳໃຊ້ຊັບສິນຂອງລັດ ດ້ວຍການເຊົ່າ ຫຼື ສຳປະທານ ຕາມລະບຽບກົດໝາຍ.

ການນຳໃຊ້ລັດຖະສົມບັດ ແມ່ນ ເພື່ອຈຸດປະສົງຮັບໃຊ້ວຽກງານລັດບໍລິຫານວິຊາການ ແລະ ການລົງທຶນຂອງລັດ ຊຶ່ງສາມາດປ່ຽນສິດຄຸ້ມຄອງ ແລະ ນຳໃຊ້ດ້ວຍການໂອນກຳມະສິດ ແລະ ເປັນສິນຄ້າຕາມລະບຽບກົດໝາຍ.

ຊັບສິນຂອງລັດ ບໍ່ຖືກຍຶດ, ອາຍັດ ຫຼື ຮິບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍກຳມະສິດ ເວັ້ນເສຍແຕ່ພາຫະນະທາງດ້ານການເງິນ ແລະ ຊັບສິ່ງຂອງອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 28 (ໃໝ່) ການນຳໃຊ້ສາທາລະນະສົມບັດ**

ການນຳໃຊ້ສາທາລະນະສົມບັດ ທີ່ເກີດຂຶ້ນຕາມທຳມະຊາດ ຕ້ອງຮັບປະກັນການປະຢັດ, ຄວາມຍືນຍົງ ແລະ ການປົກປັກຮັກສາສິ່ງແວດລ້ອມ.

ສາທາລະນະສົມບັດ ທີ່ສ້າງຂຶ້ນເພື່ອຮັບໃຊ້ສາທາລະນະ ຕ້ອງນຳໃຊ້ໃຫ້ສອດຄ່ອງກັບເປົ້າໝາຍ, ຈຸດພິເສດ ແລະ ລັກສະນະສະເພາະຂອງແຕ່ລະປະເພດຊັບສິນ, ຮັບປະກັນໃຫ້ສາມາດນຳໃຊ້ໄດ້ຢ່າງມີປະໂຫຍດສູງສຸດ ແລະ ຍາວນານ.

ຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າ ສ້າງລະບຽບການນຳໃຊ້ສາທາລະນະສົມບັດແຕ່ລະປະເພດທີ່ນອນໃນຄວາມຮັບຜິດຊອບຂອງຕົນ ແລ້ວນຳສະເໜີລັດຖະບານພິຈາລະນາ.

**ມາດຕາ 29 (ໃໝ່) ການນຳໃຊ້ ລັດຖະສົມບັດ ເຂົ້າໃນວຽກງານລັດບໍລິຫານວິຊາການ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງອື່ນຂອງລັດ ຕ້ອງນຳໃຊ້ລັດຖະສົມບັດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເຂົ້າໃນການເຄື່ອນໄຫວວຽກງານລັດບໍລິຫານວິຊາການ ແລະ ໃຫ້ຖືກຕ້ອງຕາມລະບຽບການ, ເປົ້າໝາຍ, ລັກສະນະ, ມີປະສິດທິພາບ, ປະສິດທິຜົນ ແລະ ປະຢັດ.

**ມາດຕາ 30 (ໃໝ່) ການນຳໃຊ້ລັດຖະສິນບັດ ເຂົ້າໃນການດຳເນີນທຸລະກິດ**

ລັດຖະສິນບັດ ທີ່ມອບໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້ເຂົ້າໃນການດຳເນີນທຸລະກິດ ຕ້ອງນຳໃຊ້ໃຫ້ຖືກຕາມເປົ້າໝາຍການລົງທຶນ, ຕາມບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນການລົງທຶນທີ່ໄດ້ຮັບອະນຸມັດ ຫຼື ຕາມທີ່ໄດ້ກຳນົດໄວ້ໃນສັນຍາ, ຮັບປະກັນການດຳເນີນທຸລະກິດ ໃຫ້ມີປະສິດທິຜົນ ແລະ ປະຕິບັດພັນທະທາງດ້ານການເງິນໃຫ້ລັດ ຢ່າງເຂັ້ມງວດຕາມລະບຽບກົດໝາຍ.

**ມາດຕາ 31 (ໃໝ່) ການນຳໃຊ້ຊັບສິນທີ່ໄດ້ຈາກໂຄງການກູ້ຢືມ ຫຼື ຊ່ວຍເຫຼືອລ້າ**

ຊັບສິນ ທີ່ລັດໄດ້ຮັບຈາກໂຄງການກູ້ຢືມ ຫຼື ຊ່ວຍເຫຼືອລ້າຈາກພາຍໃນ ແລະ ຕ່າງປະເທດ ຕ້ອງນຳໃຊ້ໃຫ້ຖືກຕ້ອງຕາມເປົ້າໝາຍຂອງໂຄງການ, ມີການປົກປັກຮັກສາ, ນຳໃຊ້ຢ່າງປະຢັດ, ມີປະສິດທິພາບ ແລະ ປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງອື່ນ ທີ່ເປັນເຈົ້າຂອງໂຄງການ ຕ້ອງສະຫຼຸບລາຍງານກ່ຽວກັບຊັບສິນທັງໝົດຂອງໂຄງການ ໃຫ້ກະຊວງການເງິນ ແລະ ກະຊວງແຜນການ ແລະ ການລົງທຶນຊາບກ່ອນໂຄງການຈະສິ້ນສຸດລົງສາມເດືອນ ເພື່ອແຕ່ງຕັ້ງຄະນະກຳມະການກວດກາຊັບສິນຂອງໂຄງການ. ຊັບສິນຂອງໂຄງການປະເພດສິ່ງກໍ່ສ້າງ, ພາຫະນະ ແລະ ວັດຖູປະກອນ, ວັດຖຸມີຄ່າ, ເງິນ ທີ່ໄດ້ນຳໃຊ້ໃນໄລຍະປະຕິບັດໂຄງການແລ້ວນັ້ນ ຕ້ອງຕີມູນຄ່າ ແລະ ຂຶ້ນບັນຊີຄືນໃໝ່.

ພາຍຫຼັງສິ້ນສຸດໂຄງການແລ້ວ ເຈົ້າຂອງໂຄງການ ຕ້ອງມອບຊັບສິນຂອງໂຄງການທັງໝົດໃຫ້ແກ່ກະຊວງການເງິນ ເພື່ອຄຸ້ມຄອງ ແລະ ສະເໜີແຜນການນຳໃຊ້ໃຫ້ລັດຖະບານຕົກລົງ.

**ມາດຕາ 32 (ໃໝ່) ການນຳໃຊ້ຊັບສິນຂອງລັດ ເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ການນຳໃຊ້ຊັບສິນຂອງລັດ ເຂົ້າໃນວຽກງານທົ່ວໄປໃນຂະແໜງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

ສຳລັບການນຳໃຊ້ຊັບສິນຂອງລັດ ທີ່ພົວພັນເຖິງວຽກງານວິຊາສະເພາະ ຫຼື ຄວາມລັບຂອງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 33 (ໃໝ່) ການນຳໃຊ້ຊັບສິນຂອງລັດຢູ່ຕ່າງປະເທດ**

ການນຳໃຊ້ຊັບສິນຂອງລັດຢູ່ຕ່າງປະເທດ ໃຫ້ປະຕິບັດຕາມກົດໝາຍສະບັບນີ້ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ, ປະຕິບັດຢ່າງສອດຄ່ອງກັບນະໂຍບາຍການຕ່າງປະເທດ ແລະ ກົດໝາຍຂອງປະເທດທີ່ຊັບສິນຂອງລັດຕັ້ງຢູ່.

ມາດຕາ 34 (ໃໝ່) **ການຖອນຄືນຊັບສິນຂອງລັດ**

**ຊັບສິນຂອງລັດ ທີ່ມອບໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້ ອາດຖືກຖອນຄືນໃນກໍລະນີ ດັ່ງນີ້:**

1. ໝົດໜ້າທີ່ຕຳແໜ່ງໃນການນຳໃຊ້ ຫຼື ບໍ່ຢູ່ໃນເປົ້າໝາຍການນຳໃຊ້;
2. ບໍ່ຕ້ອງການນຳໃຊ້, ນຳໃຊ້ບໍ່ຖືກເປົ້າໝາຍ, ນຳໃຊ້ບໍ່ມີປະສິດທິຜົນ;
3. ເກີນກຳນົດໝາຍນຳໃຊ້ ຫຼື ສິ້ນສຸດໂຄງການ.

ຂະແໜງການການເງິນ ຄົ້ນຄວ້າ ແລະ ນຳສະເໜີຕໍ່ລັດຖະບານ ຫຼື ອົງການປົກຄອງທ້ອງຖິ່ນຂັ້ນທີ່ມີສິດ ເພື່ອພິຈາລະນາຖອນຄືນ ແລະ ຕົກລົງກ່ຽວກັບການນຳໃຊ້ຊັບສິນຂອງລັດ.

## ໝວດທີ 3
## ການປົກປັກຮັກສາ ແລະ ການພັດທະນາຊັບສິນຂອງລັດ

ມາດຕາ 35 (ປັບປຸງ) **ພັນທະໃນການປົກປັກຮັກສາ ແລະ ການພັດທະນາຊັບສິນຂອງລັດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບສິດຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ມີພັນທະ ປົກປັກຮັກສາ, ພັດທະນາ, ຟື້ນຟູ ຫຼື ສ້ອມແປງໃຫ້ຢູ່ໃນສະພາບດີ, ບໍ່ໃຫ້ຕົກເຮ່ຍເສຍຫາຍ ແລະ ເສື່ອມຄຸນນະພາບ ຕາມມາດຕະຖານເຕັກນິກຂອງແຕ່ລະປະເພດຊັບສິນ.

ມາດຕາ 36 (ປັບປຸງ) **ການຂຶ້ນແຜນປົກປັກຮັກສາ ແລະ ພັດທະນາຊັບສິນຂອງລັດ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງອື່ນ ທີ່ໄດ້ຮັບສິດຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດເຂົ້າໃນວຽກງານລັດບໍລິຫານວິຊາການ ມີໜ້າທີ່ຂຶ້ນແຜນປົກປັກຮັກສາ, ພັດທະນາ, ຟື້ນຟູ ຫຼື ສ້ອມແປງຊັບສິນດັ່ງກ່າວ ເພື່ອເອົາເຂົ້າແຜນງົບປະມານ ຕາມລະບຽບກົດໝາຍ.

## ໝວດທີ 4
## ການສະສາງຊັບສິນຂອງລັດ

ມາດຕາ 37 (ໃໝ່) **ການສະສາງຊັບສິນຂອງລັດ**

ການສະສາງຊັບສິນຂອງລັດ ແມ່ນ ການຊີ້ຂາດຊັບສິນຂອງລັດ ດ້ວຍການຂາຍ, ການຮື້ຖອນ ແລະ ການທຳລາຍ.

**ຊັບສິນຂອງລັດ ຈະຖືກສະສາງໃນກໍລະນີ ດັ່ງນີ້:**

1. ໝົດອາຍຸການນຳໃຊ້ ແລະ ບໍ່ຕ້ອງການນຳໃຊ້;
2. ເປ່ເພບໍ່ສາມາດນຳໃຊ້ໄດ້ ຫຼື ສ້ອມແປງກໍບໍ່ມີປະສິດທິຜົນ;
3. ເສື່ອມຄຸນໄວ;

4. ຕິດພັນກັບອະສັງຫາລິມະຊັບ ຊຶ່ງຕ້ອງໄດ້ຍົກຍ້າຍ, ຮື້ຖອນອອກຕາມການຕົກລົງຂອງອົງການທີ່ມີສິດອຳນາດ;

5. ທີ່ລັດໄດ້ຕົກລົງສະສາງອອກຕາມລະບຽບກົດໝາຍ.

ລາຍໄດ້ຈາກການສະສາງຊັບສິນຂອງລັດ ຕ້ອງມອບເຂົ້າງົບປະມານແຫ່ງລັດ ຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 38 (ໃໝ່) ການຂາຍຊັບສິນຂອງລັດ**

ການຂາຍຊັບສິນຂອງລັດ ຕ້ອງໄດ້ປະເມີນລາຄາໂດຍຄະນະກຳມະການທີ່ກ່ຽວຂ້ອງ ແລະ ຕ້ອງດຳເນີນຕາມຂັ້ນຕອນການປະມູນແບບເປີດກວ້າງ, ໂປ່ງໃສ, ຍຸຕິທຳ, ຮັບປະກັນຜົນປະໂຫຍດສູງສຸດຂອງລັດ ແລະ ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 39 (ໃໝ່) ການຮື້ຖອນຊັບສິນຂອງລັດ**

**ການຮື້ຖອນ ແມ່ນ ການຍົກຍ້າຍ ຫຼື ທັບມ້າງສິ່ງກໍ່ສ້າງຂອງລັດ ຊຶ່ງຈະດຳເນີນໄດ້ໃນກໍລະນີ ດັ່ງນີ້:**

1. ການປະຕິບັດຕາມແຜນພັດທະນາເສດຖະກິດ-ສັງຄົມ;
2. ສິ່ງກໍ່ສ້າງຂອງລັດ ທີ່ມີການເປ່ເພ, ຊຸດໂຊມ ຫຼື ບໍ່ໄດ້ມາດຕະຖານເຕັກນິກ.

ການຮື້ຖອນ ຕ້ອງມີການກວດກາ ແລະ ເຫັນດີຈາກຂະແໜງການການເງິນ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ສຳລັບວັດຖຸ ທີ່ຍັງມີຄ່າຈາກການມ້າງ ຫຼື ຮື້ຖອນນັ້ນ ຕ້ອງນຳມາໃຊ້ຄືນໃຫ້ໝົດຄຸນຄ່າຂອງຊັບສິນດັ່ງກ່າວ ຫຼື ຂາຍອອກ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 38 ຂອງກົດໝາຍສະບັບນີ້.

**ມາດຕາ 40 (ໃໝ່) ການທຳລາຍຊັບສິນຂອງລັດ**

ຊັບສິນຂອງລັດ ທີ່ບໍ່ສາມາດຮັກສາໄວ້ ເນື່ອງຈາກໝົດຄຸນຄ່າການນຳໃຊ້, ສິ່ງຜົນກະທົບຕໍ່ຊີວິດ, ສັງຄົມ ແລະ ທຳລາຍສິ່ງແວດລ້ອມ ຕ້ອງທຳລາຍ ໂດຍປະຕິບັດຕາມລະບຽບກົດໝາຍກ່ຽວກັບສິ່ງແວດລ້ອມ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

## ພາກທີ IV
## ລາຍຮັບຈາກຊັບສິນຂອງລັດ

**ມາດຕາ 41 (ໃໝ່) ລາຍຮັບຈາກຊັບສິນຂອງລັດ**

ລາຍຮັບຈາກຊັບສິນຂອງລັດ ແມ່ນ ລາຍຮັບ ທີ່ເກີດຂຶ້ນຈາກການນຳໃຊ້ຊັບສິນຂອງລັດ ຊຶ່ງຕ້ອງໄດ້ລວມສູນເຂົ້າເປັນງົບປະມານແຫ່ງລັດ.

ມາດຕາ 42 (ໃໝ່) **ແຫຼ່ງລາຍຮັບຈາກຊັບສິນຂອງລັດ**

**ແຫຼ່ງລາຍຮັບຈາກຊັບສິນຂອງລັດ ມີ ດັ່ງນີ້:**

1. ການໃຫ້ເຊົ່າ, ໃຫ້ສຳປະທານ ສັງຫາລິມະຊັບ ແລະ ອະສັງຫາລິມະຊັບທີ່ເປັນຊັບສິນຂອງລັດ;

2. ຄ່າຊັບພະຍາກອນທຳມະຊາດ, ຄ່າພາກຫຼວງ, ຄ່າບິນຜ່ານ, ຄ່າຄົ້ນຄວາມຖີ່ຂອງການສື່ສານໂທລະຄົມມະນາຄົມ, ຄ່າຊັບສິນທາງປັນຍາຂອງອົງການຈັດຕັ້ງລັດ;

3. ການຂາຍ, ການແລກປ່ຽນ, ການທົດແທນ, ການເວນຄືນ, ການມອບ-ໂອນໃຫ້ລັດລ້າໆ ແລະ ຊັບສິນທີ່ບໍ່ມີເຈົ້າຂອງ ຫຼື ມູນມໍຣະດົກ ທີ່ບໍ່ມີສາຍຍາດສືບທອດ;

4. ກອງທຶນຂອງລັດ ແລະ ການຊ່ວຍເຫຼືອລ້າຈາກພາຍໃນ ແລະ ຕ່າງປະເທດ;

5. ລາຍຮັບຈາກການປັນຜົນກຳໄລ ແລະ ການຂາຍຮຸ້ນຂອງລັດຖະບານ;

6. ຄ່າທຳນຽມ ແລະ ຄ່າບໍລິການ ທີ່ນຳໃຊ້ຊັບສິນຂອງລັດ;

7. ການຮິບ, ການຂາຍຊັບທີ່ຖືກຮິບ, ການປັບໃໝ ຕາມລະບຽບກົດໝາຍ;

8. ລາຍຮັບອື່ນ ຈາກຊັບສິນຂອງລັດ.

ທຸກແຫຼ່ງລາຍຮັບຈາກຊັບສິນຂອງລັດ ຕ້ອງມອບເຂົ້າງົບປະມານແຫ່ງລັດຢ່າງລວມສູນ.

## ພາກທີ V
## ຂໍ້ຫ້າມ

ມາດຕາ 43 (ໃໝ່) **ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ ຄຸ້ມຄອງຊັບສິນຂອງລັດ**

**ຫ້າມພະນັກງານ ແລະ ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ມີ ພຶດຕິກຳໃດໜຶ່ງ ດັ່ງນີ້:**

1. ເປີດເຜີຍຄວາມລັບຂອງລັດ, ທາງລັດຖະການ, ກົດໜ່ວງຖ່ວງດຶງ, ປະລະໜ້າທີ່ ແລະ ຄວາມຮັບຜິດຊອບຕໍ່ວຽກງານທີ່ໄດ້ຮັບມອບໝາຍ;

2. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ, ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ຂັດຂວາງ, ຮັບສິນບົນ, ກໍ່ຄວາມເສັຍຫາຍຕໍ່ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ຂອງລັດ;

3. ກຳນົດບໍລິມາດ ແລະ ລາຄາຊັບສິນຂອງລັດ ບໍ່ຖືກຕ້ອງຕາມລະບຽບກົດໝາຍ ຊຶ່ງເຮັດໃຫ້ລັດເສັຍຜົນປະໂຫຍດ;

4. ປົກປ້ອງ ຫຼື ສົມຮູ້ຮ່ວມຄິດ ກັບຜູ້ດຳເນີນທຸລະກິດ ກະທຳຜິດຕໍ່ລະບຽບກົດໝາຍ;

5. ປອມແປງໃບເກັບເງິນ, ໃບຮັບເງິນ ຫຼື ເອກະສານອື່ນ, ຊຸກເຊື່ອງ, ສັບປ່ຽນປະລິມານ ຫຼື ຄຸນນະພາບຂອງຊັບສິນ;

6. ນຳເອົາເງິນລາຍຮັບຈາກຊັບສິນຂອງລັດ ທີ່ເກັບໄດ້ ມານຳໃຊ້ສ່ວນຕົວ, ຊັກຊ້າໃນການມອບເຂົ້າງົບປະມານຕາມກຳນົດເວລາ ຫຼື ມອບບໍ່ຄົບຖ້ວນ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 44 (ໃໝ່) ຂໍ້ຫ້າມສໍາລັບ ຜູ້ໄດ້ຮັບສິດຄຸ້ມຄອງ ແລະ ນໍາໃຊ້ ຊັບສິນຂອງລັດ**

ຫ້າມຜູ້ໄດ້ຮັບສິດຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ ມີພຶດຕິກໍາໃດໜຶ່ງ ດັ່ງນີ້:

1. ທໍາລາຍຂໍ້ມູນຫຼັກຖານ, ປອມແປງເອກະສານ, ປອມແປງມາດຕະຖານເຕັກນິກ, ສັບປ່ຽນປະລິມານ ຫຼື ຄຸນນະພາບຂອງຊັບສິນ, ຊຸກເຊື່ອງການກະທໍາຜິດ;
2. ປິດບັງລາຍຮັບ ແລະ ການມອບພັນທະກ່ຽວກັບການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ;
3. ໃຫ້ສິນບົນ ຫຼື ຄ່າຈ້າງ ແກ່ພະນັກງານ ຫຼື ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ຫຼື ສົມຮູ້ຮ່ວມຄິດເອົາຊັບສິນຂອງລັດ;
4. ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ຂັດຂວາງ, ໝິ່ນປະໝາດ ແລະ ທໍາຮ້າຍຮ່າງກາຍພະນັກງານ ຫຼື ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ;
5. ເອົາຊັບສິນຂອງລັດ ມາເປັນກໍາມະສິດສ່ວນຕົວ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
6. ທວງເອົາ ຫຼື ຮຽກຮ້ອງຄ່າຕອບແທນເກີນກວ່າຄວາມເປັນຈິງ ໃນກໍລະນີທີ່ລັດເວນຄືນ;
7. ປະລະໜ້າທີ່ ຫຼື ຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ ທີ່ກໍ່ໃຫ້ເກີດຄວາມເສຍຫາຍຕໍ່ຊັບສິນຂອງລັດ;
8. ນໍາໃຊ້ຊັບສິນຂອງລັດ ບໍ່ຖືກຕ້ອງຕາມເປົ້າໝາຍ ແລະ ມາດຕະຖານເຕັກນິກ;
9. ຊື້-ຂາຍ, ແລກປ່ຽນ, ມອບ-ໂອນ, ເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ ແລະ ນໍາໄປຄໍ້າປະກັນໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ;
10. ເອົາຊັບສິນຂອງໂຄງການ ທີ່ໄດ້ສິ້ນສຸດໂຄງການແລ້ວໄປນໍາໃຊ້ກ່ອນການອະນຸມັດ;
11. ເອົາລາຍຮັບຈາກຊັບສິນຂອງລັດ ໄປນໍາໃຊ້ນອກລະບົບງົບປະມານ;
12. ມີພຶດຕິກໍາອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 45 (ໃໝ່) ຂໍ້ຫ້າມສໍາລັບບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມບຸກຄົນ ຫຼື ການຈັດຕັ້ງອື່ນ ມີ ພຶດຕິກໍາໃດໜຶ່ງ ດັ່ງນີ້:

1. ນໍາໃຊ້ຊັບສິນຂອງລັດໂດຍບໍ່ໄດ້ຮັບອະນຸຍາດ;
2. ປອມແປງເອກະສານ ເພື່ອຄຸ້ມຄອງ ແລະ ນໍາໃຊ້ຊັບສິນຂອງລັດ;
3. ບຸກລຸກ, ທໍາລາຍ ຫຼື ສ້າງຄວາມເສຍຫາຍ ແກ່ຊັບສິນຂອງລັດ;
4. ຊື້-ຂາຍ, ເຄື່ອນຍ້າຍ ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ ຫຼື ລັກໂລບຊັບສິນຂອງລັດ;
5. ໃສ່ຮ້າຍ, ບິດເບືອນຄວາມເປັນຈິງ ໃນການປະຕິບັດໜ້າທີ່ ຂອງພະນັກງານ ແລະ ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ;
6. ຈັບຈອງ, ຊອກຄົ້ນ, ສໍາຫຼວດ, ຂຸດຄົ້ນ ຊັບສິນຂອງລັດ ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ;

7. ລະເມີດລິຂະສິດ ຫຼື ສິດທິພິເສດຂອງລັດ;

8. ປອມແປງທະບຽນ, ເລກລະຫັດ, ກາໝາຍ ຊັບສິນຂອງລັດ;

9. ປິດບັງ ລາຍຮັບ ແລະ ຫຼົບຫຼີກພັນທະກ່ຽວກັບຊັບສິນຂອງລັດ;

10. ໃຫ້ສິນບົນ ຫຼື ຄ່າຈ້າງແກ່ພະນັກງານ ຫຼື ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ຫຼື ສົມຮູ້ຮ່ວມຄິດເອົາຊັບສິນຂອງລັດ;

11. ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ຂັດຂວາງການປະຕິບັດໜ້າທີ່, ໝິ່ນປະໝາດ ຫຼື ທຳຮ້າຍຮ່າງກາຍພະນັກງານ ຫຼື ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ;

12. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## ພາກທີ VI
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 46 (ປັບປຸງ) ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບຊັບສິນຂອງລັດ**

ຂໍ້ຂັດແຍ່ງກ່ຽວກັບຊັບສິນຂອງລັດ ສາມາດແກ້ໄຂດ້ວຍວິທີໃດໜຶ່ງ ດັ່ງນີ້:

1. ການໄກ່ເກ່ຍ ຫຼື ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານ.

**ມາດຕາ 47 (ໃໝ່) ການໄກ່ເກ່ຍ ຫຼື ການປະນີປະນອມ**

ຂໍ້ຂັດແຍ່ງກ່ຽວກັບຊັບສິນຂອງລັດ ລະຫວ່າງອົງການຄຸ້ມຄອງ ກັບຜູ້ໄດ້ຮັບສິດຄຸ້ມຄອງ ແລະ ນຳໃຊ້ ສາມາດແກ້ໄຂດ້ວຍການໄກ່ເກ່ຍ ຫຼື ການປະນີປະນອມ.

**ມາດຕາ 48 (ປັບປຸງ) ການແກ້ໄຂທາງດ້ານບໍລິຫານ**

ຂໍ້ຂັດແຍ່ງກ່ຽວກັບຊັບສິນຂອງລັດ ທີ່ມີລັກສະນະບໍລິຫານ ເຊັ່ນ ການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ໂດຍບໍ່ໄດ້ຮັບອະນຸຍາດ, ການນຳໃຊ້ຊັບສິນຂອງລັດ ບໍ່ຖືກຕາມຈຸດປະສົງ, ເປົ້າໝາຍ ຫຼື ລະບຽບກົດໝາຍ ແມ່ນ ໜ້າທີ່ຂອງຂະແໜງການການເງິນ ໂດຍສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເປັນຜູ້ພິຈາລະນາແກ້ໄຂ.

**ມາດຕາ 49 (ໃໝ່) ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນຂໍ້ຂັດແຍ່ງທີ່ມີລັກສະນະເສດຖະກິດ ກ່ຽວກັບຊັບສິນຂອງລັດ ຄູ່ກໍລະນີ ສາມາດຮ້ອງຂໍຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂ ຕາມກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

ມາດຕາ 50 (ໃໝ່) ການຮ້ອງຟ້ອງຕໍ່ສານ

ຄູ່ກໍລະນີ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອຕັດສິນຄະດີ ກ່ຽວກັບຊັບສິນຂອງລັດ ຕາມລະບຽບກົດໝາຍ ເປັນຕົ້ນ ຊັບສິນຂອງລັດ ທີ່ຕິດພັນກັບຄວາມຮັບຜິດຊອບທາງແພ່ງ ເຊັ່ນ ການບໍ່ປະຕິບັດສັນຍາ, ການກໍ່ຄວາມເສັຍຫາຍແກ່ຊັບສິນຂອງລັດ, ການທຳລາຍ, ການຍັກຍອກ, ຊັບສິນຂອງລັດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ, ການດຳເນີນຄະດີອາຍາ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

## ພາກທີ VII
## ການຄຸ້ມຄອງ ແລະ ກວດກາ ຊັບສິນຂອງລັດ
### ໝວດທີ 1
### ອົງການຄຸ້ມຄອງຊັບສິນຂອງລັດ

ມາດຕາ 51 (ໃໝ່) ອົງການຄຸ້ມຄອງຊັບສິນຂອງລັດ

ລັດຖະບານ ເປັນຜູ້ຄຸ້ມຄອງຊັບສິນຂອງລັດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ຂະແໜງການການເງິນ ເປັນເຈົ້າການຮັບຜິດຊອບ ແລະ ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ອົງການຄຸ້ມຄອງຊັບສິນຂອງລັດ ປະກອບດ້ວຍ:**

1. ກະຊວງການເງິນ ຊຶ່ງມີກົມຄຸ້ມຄອງຊັບສິນຂອງລັດ ເປັນເສນາທິການ;
2. ພະແນກການເງິນ ແຂວງ, ນະຄອນ ຊຶ່ງມີຫ້ອງການຄຸ້ມຄອງຊັບສິນຂອງລັດ ເປັນເສນາທິການ;
3. ຫ້ອງການການເງິນ ເມືອງ, ເທດສະບານ ຊຶ່ງມີໜ່ວຍງານຄຸ້ມຄອງຊັບສິນຂອງລັດ ເປັນເສນາທິການ;
4. ໜ່ວຍງານການເງິນບ້ານ.

ມາດຕາ 52 (ໃໝ່) ສິດ ແລະ ໜ້າທີ່ຂອງກະຊວງການເງິນ

**ໃນການຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້າ, ສ້າງແຜນຍຸດທະສາດ, ແຜນນະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ໂດຍປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ;
2. ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ແຜນນະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານຄຸ້ມຄອງຊັບສິນຂອງລັດໃນຂອບເຂດທົ່ວປະເທດ;
3. ຊີ້ນຳ, ຂຶ້ນບັນຊີ, ຂຶ້ນທະບຽນ ແລະ ການນຳໃຊ້ລັດຖະສົມບັດໃນຂອບເຂດທົ່ວປະເທດ;

4. ພິຈາລະນາແຜນການການສະເໜີຂອງ ນິຕິບຸກຄົນ ແລະ ການຈັດຕັ້ງອື່ນທີ່ນໍາໃຊ້ງົບປະມານຂອງລັດ ກ່ຽວກັບການຊື້ໃໝ່, ການກໍ່ສ້າງ, ການສ້ອມແປງ, ການສະສາງ ທີ່ນໍາໃຊ້ງົບປະມານຂອງລັດ;

5. ຄົ້ນຄວ້າກ່ຽວກັບການນໍາໃຊ້, ການມອບ-ໂອນ, ການປ່ຽນສິດຄຸ້ມຄອງ, ການສະສາງ, ການໃຫ້ເຊົ່າ ຫຼື ສໍາປະທານ, ການເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ ເພື່ອນໍາສະເໜີ ລັດຖະບານພິຈາລະນາ;

6. ອະນຸຍາດການນໍາໃຊ້, ການມອບ-ໂອນ, ການປ່ຽນສິດຄຸ້ມຄອງ, ການສະສາງ, ການໃຫ້ເຊົ່າ ຫຼື ສໍາປະທານ, ການເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ສ້າງ, ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນການເກັບລາຍຮັບຈາກຊັບສິນຂອງລັດເຂົ້າງົບປະມານແຫ່ງລັດ;

8. ຄຸ້ມຄອງວຽກງານປະມູນການຈັດຊື້, ການສະສາງ ຊັບສິນຂອງລັດ ຕາມຄວາມຮັບຜິດຊອບຂອງຕົນ;

9. ສ້າງ ແລະ ພັດທະນາລະບົບຖານຂໍ້ມູນສະຖິຕິ ກ່ຽວກັບຊັບສິນຂອງລັດ ຕາມຄວາມຮັບຜິດຊອບຂອງຕົນ;

10. ຊີ້ນໍາ ແລະ ຕິດຕາມການເຄື່ອນໄຫວວຽກງານຂອງຂະແໜງການຄຸ້ມຄອງຊັບສິນຂອງລັດ ທີ່ຂຶ້ນກັບຕົນ;

11. ບໍາລຸງ ສ້າງ, ຍົກລະດັບຄວາມຮູ້ຄວາມສາມາດ ແລະ ຄຸນທາດດ້ານການເມືອງໃຫ້ບຸກຄະລາກອນຂະແໜງການຄຸ້ມຄອງຊັບສິນຂອງລັດ ຕາມຄວາມຮັບຜິດຊອບຂອງຕົນ;

12. ປັບປຸງກົມຄຸ້ມຄອງຊັບສິນຂອງລັດ, ຫ້ອງການຄຸ້ມຄອງຊັບສິນຂອງລັດ ແຂວງ, ນະຄອນ, ໜ່ວຍງານຄຸ້ມຄອງຊັບສິນຂອງລັດ ເມືອງ, ເທດສະບານ ແລະ ໜ່ວຍງານການເງິນບ້ານ ພ້ອມທັງປະກອບອຸປະກອນ ງົບປະມານຢ່າງພຽງພໍ;

13. ປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊັບສິນຂອງລັດ;

14. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງຊັບສິນຂອງລັດ;

15. ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ລັດຖະບານຢ່າງເປັນປົກກະຕິ;

16. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

ມາດຕາ 53 (ໃໝ່) ສິດ ແລະ **ໜ້າທີ່ຂອງພະແນກການເງິນ ແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານຊັບສິນຂອງລັດ ພະແນກການເງິນ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍແຜນຍຸດທະສາດ, ແຜນນະໂຍບາຍ ກ່ຽວກັບວຽກງານຄຸ້ມຄອງຊັບສິນຂອງລັດ ໃຫ້ເປັນແຜນການ, ແຜນງານ ແລະ ໂຄງການລະອຽດ;

2. ໂຄສະນາ, ເຜີຍແຜ່ແຜນຍຸດທະສາດ, ແຜນນະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບຊັບສິນຂອງລັດ;

3. ຊີ້ນຳ ແລະ ຕິດຕາມການເຄື່ອນໄຫວວຽກງານຂອງຫ້ອງການຄຸ້ມຄອງຊັບສິນຂອງລັດ;

4. ສ້າງແຜນບຳລຸງ ສ້າງ, ຍົກລະດັບຄວາມຮູ້ຄວາມສາມາດ ແລະ ຄຸນທາດດ້ານການເມືອງໃຫ້ບຸກຄະລາກອນຂະແໜງການຄຸ້ມຄອງຊັບສິນຂອງລັດ;

5. ຄຸ້ມຄອງການຂຶ້ນທະບຽນ, ການຂຶ້ນບັນຊີ ແລະ ການນຳໃຊ້ລັດຖະສິມບັດ;

6. ພິຈາລະນາແຜນການການສະເໜີ ກ່ຽວກັບການຊື້ໃໝ່, ການກໍ່ສ້າງ, ການສ້ອມແປງ ທີ່ນຳໃຊ້ງົບປະມານຂອງລັດ;

7. ຄົ້ນຄວ້າກ່ຽວກັບການນຳໃຊ້, ການມອບ-ໂອນ, ການປ່ຽນສິດຄຸ້ມຄອງ, ການສະສາງ, ການໃຫ້ເຊົ່າ ຫຼື ສຳປະທານ, ການເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ ເພື່ອນຳສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນ ພິຈາລະນາ ຕາມການແບ່ງຂັ້ນຄຸ້ມຄອງ;

8. ອະນຸຍາດການນຳໃຊ້, ການມອບ-ໂອນ, ການປ່ຽນສິດຄຸ້ມຄອງ, ການສະສາງ, ການໃຫ້ເຊົ່າ ຫຼື ສຳປະທານ, ການເອົາເຂົ້າຮຸ້ນ ຫຼື ຮ່ວມທຶນ;

9. ສ້າງ, ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນການເກັບລາຍຮັບຈາກຊັບສິນຂອງລັດເຂົ້າງົບປະມານແຫ່ງລັດ;

10. ຄຸ້ມຄອງວຽກງານປະມູນການຈັດຊື້, ກໍ່ສ້າງ, ສ້ອມແປງ ແລະ ການສະສາງ ລັດຖະສິມບັດ;

11. ສ້າງ ແລະ ພັດທະນາລະບົບຖານຂໍ້ມູນສະຖິຕິ ກ່ຽວກັບລັດຖະສິມບັດ;

12. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງທີ່ພົວພັນກັບວຽກງານຄຸ້ມຄອງຊັບສິນຂອງລັດ;

13. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງຊັບສິນຂອງລັດ ຕາມການມອບໝາຍຂອງຂັ້ນເທິງ;

14. ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນຕໍ່ກະຊວງການເງິນ ແລະ ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;

15. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຫຼື ຕາມການມອບໝາຍ.

### ມາດຕາ 54 (ໃໝ່) ສິດ ແລະ ໜ້າທີ່ຂອງຫ້ອງການການເງິນ ເມືອງ, ເທດສະບານ

ໃນການຄຸ້ມຄອງວຽກງານຊັບສິນຂອງລັດ ຫ້ອງການການເງິນ ເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່ແຜນຍຸດທະສາດ, ແຜນນະໂຍບາຍ ແລະ ລະບຽບກົດໝາຍ ກ່ຽວກັບຊັບສິນຂອງລັດ;
2. ຈັດຕັ້ງປະຕິບັດແຜນຍຸດທະສາດ, ແຜນນະໂຍບາຍ, ແຜນການ, ແຜນງານ ກ່ຽວກັບວຽກງານຄຸ້ມຄອງລັດຖະສິນບັດ ໃຫ້ມີປະສິດທິຜົນ;
3. ຊີ້ນໍາ ແລະ ຕິດຕາມການເຄື່ອນໄຫວວຽກງານຂອງໜ່ວຍງານການເງິນບ້ານ;
4. ສ້າງແຜນບໍາລຸງ ສ້າງ, ຍົກລະດັບຄວາມຮູ້ຄວາມສາມາດ ແລະ ຄຸນທາດດ້ານການເມືອງໃຫ້ບຸກຄະລາກອນຂະແໜງການຄຸ້ມຄອງຊັບສິນຂອງລັດ;
5. ຄຸ້ມຄອງການຂຶ້ນທະບຽນ, ການຂຶ້ນບັນຊີ ແລະ ການນໍາໃຊ້ລັດຖະສິນບັດ;
6. ສັງລວມແຜນການຊື້ໃໝ່, ການກໍ່ສ້າງ, ການສ້ອມແປງ ລັດຖະສິນບັດ ເພື່ອສະເໜີຂັ້ນເທິງພິຈາລະນາ;
7. ຄຸ້ມຄອງ ແລະ ຈັດເກັບລາຍຮັບຈາກຊັບສິນຂອງລັດ ມອບເຂົ້າງົບປະມານແຫ່ງລັດຕາມການແບ່ງຂັ້ນຄຸ້ມຄອງ;
8. ຄຸ້ມຄອງວຽກງານປະມູນການຈັດຊື້, ກໍ່ສ້າງ, ສ້ອມແປງ ແລະ ການສະສາງ ລັດຖະສິນບັດ;
9. ສ້າງ ແລະ ພັດທະນາລະບົບຖານຂໍ້ມູນສະຖິຕິ ກ່ຽວກັບລັດຖະສິນບັດ;
10. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ພົວພັນກັບວຽກງານຄຸ້ມຄອງຊັບສິນຂອງລັດ;
11. ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ພະແນກການເງິນ ແລະ ອົງການປົກຄອງເມືອງ, ເທດສະບານ ຢ່າງເປັນປົກກະຕິ;
12. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ ຫຼື ຕາມການມອບໝາຍ.

### ມາດຕາ 55 (ໃໝ່) ສິດ ແລະ ໜ້າທີ່ຂອງໜ່ວຍງານການເງິນບ້ານ

ໃນການຄຸ້ມຄອງວຽກງານຊັບສິນຂອງລັດ ໜ່ວຍງານການເງິນບ້ານ ມີ ສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເຜີຍແຜ່ລະບຽບກົດໝາຍ ກ່ຽວກັບຊັບສິນຂອງລັດ;
2. ຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງລັດຖະສິນບັດ ໃຫ້ມີປະສິດທິຜົນ;
3. ເກັບກໍາ ຂຶ້ນບັນຊີ ຊັບສິນຂອງລັດ;
4. ຈັດເກັບລາຍຮັບຈາກຊັບສິນຂອງລັດ ມອບເຂົ້າງົບປະມານແຫ່ງລັດ ຕາມການແບ່ງຂັ້ນຄຸ້ມຄອງ;
5. ປະສານສົມທົບກັບໜ່ວຍງານອື່ນ ທີ່ພົວພັນກັບວຽກງານຄຸ້ມຄອງຊັບສິນຂອງລັດ;

6. ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ຫ້ອງການການເງິນ ເມືອງ, ເທດສະບານ ແລະ ອົງການປົກຄອງບ້ານ ຢ່າງເປັນປົກກະຕິ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ຫຼື ຕາມການມອບໝາຍ.

**ມາດຕາ 56 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ປະສານສົມທົບກັບຂະແໜງການການເງິນຂັ້ນຂອງຕົນ ໃນການຄຸ້ມຄອງຊັບສິນຂອງລັດ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ອົງການກວດກາຊັບສິນຂອງລັດ

**ມາດຕາ 57 (ປັບປຸງ) ອົງການກວດກາຊັບສິນຂອງລັດ**

ອົງການກວດກາຊັບສິນຂອງລັດ ປະກອບດ້ວຍ ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

ອົງການກວດກາພາຍໃນ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງຊັບສິນຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 51 ຂອງກົດໝາຍສະບັບນີ້.

ອົງການກວດກາພາຍນອກ ມີ ສະພາແຫ່ງຊາດ, ອົງການກວດສອບແຫ່ງລັດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ.

ການກວດກາພາຍນອກ ດຳເນີນຕາມຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫຼື ການລິເລີ່ມຂອງອົງການກວດກາພາຍນອກເອງ ໃນກໍລະນີເຫັນວ່າມີບັນຫາບໍ່ຈະແຈ້ງ ຫຼື ບໍ່ໂປ່ງໃສ.

**ມາດຕາ 58 ເນື້ອໃນການກວດກາ**

**ການກວດກາຊັບສິນຂອງລັດ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:**

1. ການຈັດຕັ້ງປະຕິບັດກົດໝາຍ, ລະບຽບການຕ່າງໆ, ຈຸດປະສົງ ແລະ ເປົ້າໝາຍກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ;
2. ການຈັດຕັ້ງປະຕິບັດຂໍ້ຜູກພັນ ແລະ ເນື້ອໃນອື່ນຂອງສັນຍາ ລວມທັງເອກະສານ ທີ່ພົວພັນກັບການຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ;
3. ການຈັດຕັ້ງປະຕິບັດແຜນການ ກ່ຽວກັບການຄຸ້ມຄອງ, ການນຳໃຊ້, ການເກັບລາຍຮັບ, ການປົກປັກຮັກສາ ແລະ ການພັດທະນາ ຊັບສິນຂອງລັດ.

ມາດຕາ 59 ຮູບການການກວດກາ

ການກວດກາຊັບສິນຂອງລັດ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາແນ່ນອນ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການກວດກາຊັບສິນຂອງລັດນັ້ນ ຕ້ອງປະຕິບັດໜ້າທີ່ໃຫ້ຖືກຕ້ອງ ຕາມລະບຽບກົດໝາຍຢ່າງເຂັ້ມງວດ.

## ໝວດທີ 3
## ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ

ມາດຕາ 60 (ໃໝ່) ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ

ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ແມ່ນ ພະນັກງານຄຸ້ມຄອງຊັບສິນຂອງລັດ ທີ່ຖືກແຕ່ງຕັ້ງໄປເຄື່ອນໄຫວ ແລະ ປະຕິບັດໜ້າທີ່ສະເພາະ ຫຼື ວຽກງານສະເພາະກິດໃດໜຶ່ງ.

ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ປະຕິບັດໜ້າທີ່ຄືກັນກັບເຈົ້າໜ້າທີ່ສືບສວນ-ສອບສວນ.

ມາດຕາ 61 (ໃໝ່) ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ

ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ມີ ສິດ ແລະໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໄດ້ຮັບຄວາມຊ່ວຍເຫຼືອ ແລະ ອໍານວຍຄວາມສະດວກຈາກອົງການຈັດຕັ້ງທຸກພາກສ່ວນ, ອົງການປົກຄອງທ້ອງຖິ່ນ, ກໍາລັງປະກອບອາວຸດ ແລະ ບຸກຄົນອື່ນ ໃນເວລາປະຕິບັດໜ້າທີ່ ເມື່ອມີການຮ້ອງຂໍ;
2. ເຄື່ອນໄຫວລາດຕະເວນ ແລະ ຕິດຕາມ, ກວດກາເປົ້າໝາຍຕ່າງໆ ເປັນຕົ້ນການລັກໂລບ, ຊື້-ຂາຍ ຫຼື ແອບອ້າງສິດ ກ່ຽວກັບຊັບສິນຂອງລັດ;
3. ຄຸ້ມຄອງ ແລະ ປົກປັກຮັກສາ ພາຫະນະ, ວັດຖຸ ແລະ ສິ່ງກໍ່ສ້າງ ລວມທັງເອກະສານທີ່ກ່ຽວຂ້ອງ ທີ່ໄດ້ຍຶດ ຫຼື ອາຍັດ;
4. ພົວພັນ, ທວງໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ແຈ້ງເອກະສານ, ບັນຊີ, ສະຖິຕິຊັບສິນຂອງລັດ ແລະ ຂໍ້ມູນ ຂ່າວສານຕ່າງໆ;

5. ເຂົ້າຮ່ວມກວດກາ ແລະ ປະເມີນມູນຄ່າຊັບສິນຂອງລັດ, ເອກະສານການມອບພັນທະ ແລະ ເອກະສານການຢັ້ງຢືນສິດຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

6. ກວດກາ ການຄຸ້ມຄອງ ແລະ ການນຳໃຊ້ຊັບສິນຂອງລັດ ລວມທັງການໄລ່ລຽງການມອບພັນທະ ແລະ ເລັ່ງທວງພັນທະຄ້າງມອບ ກ່ຽວກັບຊັບສິນຂອງລັດ;

7. ສືບສວນ-ສອບສວນ, ສະຫຼຸບການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີ ແລ້ວສົ່ງໃຫ້ອົງການໄອຍະການປະຊາຊົນ;

8. ຊຸກຍູ້, ຕິດຕາມການປະຕິບັດພັນທະຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

9. ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 62 (ໃໝ່) ການຮັກສາຄວາມລັບຂອງລັດ ແລະ ທາງລັດຖະການ**

ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ທີ່ປະຕິບັດໜ້າທີ່ ຫຼື ຖືກແຕ່ງຕັ້ງໃຫ້ປະກອບສ່ວນວຽກງານ ຫຼື ເຂົ້າຮ່ວມໃນການດຳເນີນຄະດີໃດໜຶ່ງ ຕ້ອງຮັກສາຄວາມລັບຂອງລັດ ແລະ ທາງລັດຖະການຢ່າງເຂັ້ມງວດ.

## ພາກທີ VIII
## ງົບປະມານ, ເຄື່ອງແບບ, ກາໝາຍ ແລະ ຕາປະທັບ

**ມາດຕາ 63 (ໃໝ່) ງົບປະມານ**

ອົງການຄຸ້ມຄອງວຽກງານຊັບສິນຂອງລັດ ທີ່ໄດ້ກຳນົດໄວ້ໃນມາດຕາ 51 ຂອງກົດໝາຍສະບັບນີ້ ມີງົບປະມານສະເພາະ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

ການຂຶ້ນແຜນງົບປະມານນັ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 64 (ໃໝ່) ເຄື່ອງແບບ, ກາໝາຍ ແລະ ຕາປະທັບ**

ຂະແໜງການຄຸ້ມຄອງຊັບສິນຂອງລັດ ມີເຄື່ອງແບບ ແລະ ກາໝາຍສະເພາະຂອງຕົນ. ໃນເວລາປະຕິບັດໜ້າທີ່ ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ຕ້ອງນຸ່ງເຄື່ອງແບບ, ຕິດກາໝາຍສະເພາະ ແລະ ຖືບັດປະຈຳໜ້າທີ່. ໃນກໍລະນີຈຳເປັນ ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ຈະປະຕິບັດໜ້າທີ່ນອກເຄື່ອງແບບກໍໄດ້ ແຕ່ຕ້ອງສະເໜີບັດປະຈຳໜ້າທີ່ຕໍ່ຜູ້ຖືກກວດກາ.

ຂະແໜງການຄຸ້ມຄອງຊັບສິນຂອງລັດ ແຕ່ລະຂັ້ນ ມີຕາປະທັບຂອງຕົນ ເພື່ອຮັບໃຊ້ວຽກງານທາງລັດຖະການ.

ເຄື່ອງແບບ, ກາໝາຍ ແລະ ຕາປະທັບ ແມ່ນ ລັດຖະບານເປັນຜູ້ກໍານົດຕາມການສະເໜີຂອງກະຊວງການເງິນ. ສໍາລັບບັດປະຈໍາໜ້າທີ່ ແມ່ນ ກະຊວງການເງິນເປັນຜູ້ອອກໃຫ້.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 65 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການຄຸ້ມຄອງ, ນໍາໃຊ້, ປົກປັກຮັກສາ ແລະ ພັດທະນາຊັບສິນຂອງລັດ ຢ່າງມີປະສິດທິຜົນ, ສະໜອງຂໍ້ມູນກ່ຽວກັບການລະເມີດ ຫຼື ການບໍ່ປະຕິບັດພັນທະ, ທວງເກັບລາຍຮັບຈາກຊັບສິນຂອງລັດ ທີ່ເຊື່ອງອໍາຄືນມາໄດ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບກົດໝາຍ.

### ມາດຕາ 66 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ຮັບຜິດຊອບທາງແພ່ງ ຫຼື ທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

### ມາດຕາ 67 (ປັບປຸງ) ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ມີລັກສະນະເບົາ ເຊັ່ນ ນໍາໃຊ້ຊັບສິນຂອງລັດ ບໍ່ຖືກຈຸດປະສົງ, ເປົ້າໝາຍ ທີ່ບໍ່ກໍ່ຄວາມເສຍຫາຍ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

### ມາດຕາ 68 (ໃໝ່) ມາດຕະການທາງວິໄນ

ພະນັກງານ ແລະ ເຈົ້າໜ້າທີ່ຄຸ້ມຄອງຊັບສິນຂອງລັດ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍທີ່ມີມູນຄ່າບໍ່ສູງ ຈະຖືກລົງວິໄນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ກ່າວເຕືອນ ແລະ ບັນທຶກໄວ້ໃນປຶ້ມຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ-ຂັ້ນເງິນເດືອນ;
3. ປົດຕໍາແໜ່ງ ຫຼື ຍົກຍ້າຍໄປເຮັດໜ້າທີ່ອື່ນ ທີ່ມີຕໍາແໜ່ງຕໍ່າກວ່າ;
4. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

### ມາດຕາ 69 (ໃໝ່) ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈະຖືກປັບໃໝ ເມື່ອມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ນຳໃຊ້ຊັບສິນຂອງລັດ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ຖືກຕ້ອງ ຕາມເປົ້າໝາຍ ທີ່ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ;
2. ດຳເນີນການຊອກຄົ້ນ, ສຳຫຼວດ ຫຼື ຂຸດຄົ້ນ ຊັບພະຍາກອນທຳມະຊາດ ໂດຍບໍ່ໄດ້ຮັບອະນຸຍາດ;
3. ແຈ້ງຈຳນວນ ແລະ ບໍລິມາດຊັບສິນຂອງລັດ ໂດຍບໍ່ຖືກຕ້ອງກັບຕົວຈິງ;
4. ແກ່ຍາວເວລາການມອບພັນທະໃຫ້ລັດ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ ແລະ ລະບຽບກົດໝາຍ;
5. ລະເມີດສັນຍາເຊົ່າ ຫຼື ສຳປະທານຊັບສິນຂອງລັດ ຖ້າຫາກມີການຕົກລົງກັນໄວ້ໃນສັນຍາ.

ສຳລັບອັດຕາການປັບໃໝ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 70 ມາດຕະການທາງແພ່ງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ເຮັດໃຫ້ຊັບສິນຂອງລັດເປ່ເພ ຫຼື ເສຍຫາຍ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 71 (ປັບປຸງ) ມາດຕະການທາງອາຍາ

ບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງເປັນການກະທຳຜິດທາງອາຍາ ເຊັ່ນ ປອມແປງເອກະສານ, ລັກ, ສໍ້ໂກງ, ຍັກຍອກ, ທຳລາຍ ຊັບສິນຂອງລັດ, ສວຍໃຊ້ໜ້າທີ່ຕຳແໜ່ງ, ໃຊ້ອຳນາດເກີນຂອບເຂດ ກ່ຽວກັບຊັບສິນຂອງລັດ ຈະຖືກລົງໂທດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

### ມາດຕາ 72 (ໃໝ່) ມາດຕະການໂທດເພີ່ມ

ນອກຈາກໂທດຕົ້ນຕໍ ທີ່ໄດ້ກຳນົດໄວ້ໃນ ມາດຕາ 71 ຂອງກົດໝາຍສະບັບນີ້ແລ້ວ ຜູ້ກະທຳຜິດ ອາດຈະຖືກປະຕິບັດໂທດເພີ່ມ ເຊັ່ນ ຖອນໃບອະນຸຍາດໃຫ້ເຊົ່າ ຫຼື ສຳປະທານ, ຖອນສິດຄຸ້ມຄອງ ແລະ ນຳໃຊ້ຊັບສິນຂອງລັດ.

## ພາກທີ X
## ບົດບັນຍັດສຸດທ້າຍ

ມາດຕາ 73 **ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

ມາດຕາ 74 **ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ສາມສິບວັນ ນັບແຕ່ວັນປະທານປະເທດ ແຫ່ງ ສປປ ລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍ ຊັບສິນຂອງລັດ ສະບັບເລກທີ 09/ສພຊ ລົງວັນທີ 12 ຕຸລາ 2002.

ຂໍ້ກຳນົດ, ບົດບັນຍັດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້